ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ຮ່ວມມືກັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຮອງຮັບລະບົບຂໍ້ມູນຂ່າວສານສິນເຊື່ອ




ພິທີເຊັນສັນຍາຮ່ວມມືນຳໃຊ້ການບໍລິການສູນຂໍ້ມູນດິຈິຕອນ (Data Center) ລະຫ່ວາງ ສູນຂໍ້ມູນດິຈິຕອນ, ກົມເຕັກໂນໂລຊີດິຈິຕອນ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ (ກວຕ) ແລະ ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ), ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຂຶ້ນໃນວັນທີ 4 ກັນຍາ 2020 ທີ່ຫ້ອງປະຊຸມຂອງກົມດັ່ງກ່າວ. ໂດຍການໃຫ້ກຽດລົງນາມຂອງທ່ານນາງ ວິນຄຳ ລຸນທອນ ຜູ້ອຳນວຍການໃຫຍ່ ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ທ່ານ ປະສິດທິເດດ ຫຼວງວິໄລ ຫົວໜ້າສູນຂໍ້ມູນຂ່າວສານດິຈິຕອນ ແລະ ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍທ່ານ ແກ້ວນະຄອນ ໄຊສຸລຽນ ຫົວໜ້າກົມເຕັກໂນໂລຊີດິຈິຕອນ, ກວຕ, ທ່ານ ໄຂ່ແກ້ວ ຫຼວງສີວິໄລ ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ, ທຫລ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມ.

ການຮ່ວມມືກັນໃນຄັ້ງນີ້ແມ່ນເພື່ອຮອງຮັບລະບົບຂໍ້ມູນຂ່າວສານສິນເຊື່ອຂອງ ສປປ ລາວ ແນໃສ່ຍົກສູງປະສິດທິພາບ ແລະ ອຳນວຍຄວາມສະດວກໃນການຄຸ້ມຄອງການບໍລິຫານ, ການບໍລິການຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໂດຍສອດຄ່ອງຕາມແນວທາງການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນຍຸກການປະຕິວັດອຸດສາຫະກຳ 4.0 ນີ້.

ສູນຂໍ້ມູນດິຈິຕອນ ແມ່ນສູນວິຊາການໜຶ່ງ ທີ່ສັງກັດຢູ່ໃນໂຄງປະກອບການຈັດຕັ້ງຂອງກົມເຕັກໂນໂລຊີດິຈິຕອນ, ກວຕ ຊຶ່ງມີພາລະບົດບາດຄົ້ນຄວ້າ, ພັດທະນາ ແລະ ໃຫ້ບໍລິການລະບົບພື້ນຖານໂຄງລ່າງ (Digital Infrastructure), ບໍລິການຮັບຝາກຂໍ້ມູນ, ລະບົບຊອບແວ, ແອັບພິເຄຊັນ, ເວັບໄຊ, ລະບົບອີເມວ ແລະ ອື່ນໆ ຊຶ່ງໃນປັດຈຸບັນທາງສູນແມ່ນໄດ້ສຸມໃສ່ການໃຫ້ບໍລິການສູນຂໍ້ມູນ (Data Center) ທີ່ມີຄວາມທັນສະໄໝ ແລະ ປອດໄພສູງ ເພື່ອຮອງຮັບ ແລະ ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ ແລະ ເງື່ອນໄຂຂອງຜູ້ຊົມໃຊ້ໃນທົ່ວສັງຄົມ.





# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.